**ກະຊວງກະສິກຳ ແລະ ສິ່ງແວດລ້ອມ**

**ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ**

ເງິນກູ້ເລກທີ: IDA No.673580-LA ແລະ IDA No.73590-LA, ລະຫັດໂຄງການ. P178545

# **ປະກາດຮັບສະໝັກພະນັກງານ** - Request for Expression of Interest (REOI)

**ຕຳແໜ່ງ: ພະນັກງານຮາກຖານບ້ານ ຮັບຜິດຊອບ ວຽກປັບປຸງຊີວິດການເປັນຢູ່, ຈຳນວນ 01 ຕຳແໜ່ງ (ຮັບຜິດຊອບ ບ້ານເປົ້າໝາຍຂອງໂຄງການ ຈຳນວນ 5-13 ບ້ານ)**

ບ່ອນປະຈຳການແມ່ນຫ້ອງການກຸ່ມບ້ານ ເປົ້າໝາຍ ຂອງໂຄງການ ປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ເມືອງ ກະລຶມ ແຂວງ ເຊກອງ.

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຮັບສະໝັກອາສາສະໝັກຂັ້ນບ້ານ ຮັບຜິດຊອບວຽກປັບປຸງຊີວິດການເປັນຢູ່, ຈຳນວນ 01 ຕຳແໜ່ງ ເພື່ອມາປະຈຳຢູ່ຫ້ອງການກຸ່ມບ້ານ ທີ່ເມືອງ ກະລຶມ ແຂວງ ເຊກອງ ດັ່ງນີ້:

2. ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຂໍເຊີນຜູ້ທີ່ສົນໃຈ ທີ່ມີຄຸນສົມບັດຄົບຖ້ວນຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ຂ້າງລຸ່ມ ***ຍື່ນເອກະສານສະໝັກດ້ວຍຕົນເອງ*** ທີ່ຫ້ອງການ ໂຄງການ ປຊກ ເມືອງ ກະລຶມ ແຂວງ ເຊກອງ ຫລື ທາງອີເມວ ສົ່ງມາຕາມທີ່ຢູ່: **info.hr@clearlaos.org** ນີ້ພ້ອມເອກະສານຕ່າງໆທີ່ກ່ຽວຂ້ອງ ເພື່ອເປັນບ່ອນອ້າງອີງ ປະສົບການດ້ານຄວາມຮູ້, ຄວາມສາມາດ ແລະ ປະສົບການ ຂອງທ່ານ ເພື່ອມາຮັບຜິດຊອບເຮັດວຽກດັ່ງກ່າວ:

➢ ຂໍ້ກຳນົດເງື່ອນໄຂເບື້ອງຕົ້ນ ຂອງຜູ້ສະໝັກທີ່ສາມາດຍື່ນສະໝັກໄດ້ ປະກອບມີດັ່ງນີ້:

- ລະດັບທາງດ້ານການສຶກສາ: ຕ້ອງຮຽນຈົບຊັ້ນສູງຂຶ້ນໄປໃນສາຂາກະສິກຳ, ລ້ຽງສັດ, ປ່າໄມ້, ການພັດທະນາຊຸມຊົນ;
- ມີປະສົບການໃນດ້ານວຽກງານປັບປຸງຊີວິດການເປັນຢູ່, ກິດຈະກຳການສ້າງລາຍຮັບ, ການສ້າງຕັ້ງກຸ່ມດ້ານສັງຄົມ ແລະ ການຄຸ້ມຄອງ, ມີທັກສະການສື່ສານທາງສັງຄົມທີ່ດີ ແລະ ມີປະສົບການເຮັດວຽກກັບອຳນາດການປົກຄອງທ້ອງຖິ່ນ, ແມ່ຍິງ ແລະ ກຸ່ມຊົນເຜົ່າ;
- ມີທັກສະໃນການນຳໃຊ້ຄອມພິວເຕີຂັ້ນພື້ນຖານ ສາມາດນຳໃຊ້ໂປຣແກຣມ MS Office (Word, Excel);
- ສາມາດສື່ສານເປັນພາສາທ້ອງຖິ່ນ (ພາສາຊົນເຜົ່າ) ໄດ້ຈະເປັນການດີ ( ພາສາມົ້ງ,ກຶມມຸ,ອາຄາ...);
- ສາມາດເດີນທາງ ແລະ ພັກເຊົາຢູ່ບ້ານເປົ້າໝາຍໂຄງການໄດ້;
- ຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ.

➢ ເອກະສານຍື່ນສະໝັກ ປະກອບມີ:

- ໃບຄຳຮ້ອງຍື່ນສະໝັກງານ: ໃຫ້ລະບຸລະອຽດຊື່ຕຳແໜ່ງທີ່ສະໝັກ, ສະຖານທີ່ຫ້ອງການ ທີ່ສະເໜີເຂົ້າປະຈຳການ. ພ້ອມທັງປະສົບການຜ່ານມາທີ່ຄ້າຍຄືກັບວຽກທີ່ຍື່ນສະໝັກ, ລາຍຊື່ ແລະ ເບີໂທລະສັບ ຂອງຜູ້ທີ່ສາມາດຢັ້ງຢືນໃຫ້ທ່ານ ແລະ ທາງໂຄງການສາມາດສອບຖາມໄດ້ ປະມານ 3 ທ່ານ;
- ຊີວະປະຫວັດຂອງຜູ້ຍື່ນສະໝັກ ພ້ອມຮູບຖ່າຍ (ລະບຸລະອຽດ ກ່ຽວກັບລະດັບການສຶກສາ ແລະ ປະສົບການເຮັດວຽກຜ່ານມາ);
- ສຳເນົາໃບປະກາດຈົບການສຶກສາ ແລະ ໃບຄະແນນ, ໃບຢັ້ງຢືນຜ່ານການຝຶກອົບຮົມຕ່າງໆ;
- ສຳເນົາໃບຢັ້ງຢືນການເຮັດວຽກຜ່ານມາ ວຽກທີ່ຄ້າຍຄືກັບວຽກນີ້, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ບັດປະຈຳຕົວ, ໃບຂັບຂີ່.

3. ຂໍ້ມູນເພີ່ມເຕີມ ລວມທັງຂໍ້ກຳນົດເງື່ອນໄຂການອ້າງອີງຕ່າງໆ ທ່ານສາມາດພົວພັນເອົາໄດ້ ໃນເວລາເຮັດວຽກ ນັບແຕ່ເວລາ 08:00 ໂມງ ຫາ 16:00 ໂມງ, ແຕ່ວັນຈັນ ເຖິງ ວັນສຸກ ທີ່ຫ້ອງການ ໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ , ຕັ້ງຢູ່ໃນຫ້ອງວ່າການລັດຖະບານ, ບ້ານສີສະຫວາດ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ, ໂທ: 021 261479.

4. ເອກະສານຍື່ນສະໝັກ ຕ້ອງສົ່ງເປັນລາຍລັກອັກສອນ ດ້ວຍຕົນເອງ ທີ່ຫ້ອງການ ໂຄງການ ປຊກ ເມືອງ ກະລຶມ ແຂວງ ເຊກອງ ຫລື ສົ່ງທາງອີເມວ: **info.hr@clearlaos.org** ຫ້ອງການໂຄງການປັບປຸງຊີວິດການເປັນຢູ່ ແລະ ການປັບຕົວກັບການປ່ຽນແປງດິນຟ້າອາກາດ ຈະພົວພັນຫາຜູ້ທີ່ຖືກຄັດເລືອກທີ່ເໝາະສົມທີ່ສຸດ ທາງອີເມວ/ວອດແອັບ ພາຍຫລັງທີ່ໄດ້ຮັບອະນຸມັດເປັນທາງການ ຈາກໂຄງການ, **ວັນທີປິດຮັບເອກະສານຍື່ນສະໝັກ ແມ່ນວັນທີ 19 ພຶດສະພາ 2026**.

ນະຄອນຫລວງວຽງຈັນ, ວັນທີ 11 ພຶດສະພາ 2026

ຜູ້ອຳນວຍການ

ປອ. ວົງປະພັນ ມະນີວົງ